ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ



ສຳນັກງານໃຫຍ່

ເລກທີ: 076 /ທຄຕລ.....2019...........
ນະຄອນຫຼວງວຽງຈັນ, ວັນທີ:.........23 OCT 2019

**ເຖິງ:** ບັນດາບໍລິສັດຮັບເໝົາກໍ່ສ້າງ ແລະ ຕົບແຕ່ງ.

**ເລື່ອງ:** ເຊີນບໍລິສັດເຂົ້າຮ່ວມຍື່ນປະມູນສະເໜີລາຄາວຽກງານຕົບແຕ່ງໜ່ວຍບໍລິການນາເຜົ້າ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ ແລະ ຕົບແຕ່ງກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກກະສານຍື່ນຊອງສະເໜີລາຄາປະເມີນວຽກຕົບແຕ່ງໜ່ວຍບໍລິການນາເຜົ້າ ແຂວງຄຳມ່ວນ ດັ່ງມີເນື້ອໃນລຸ່ມນີ້:

1. ບໍລິສັດ ສາມາດພົວພັນເອົາເອກກະສານປະມູນ ເລີ່ມວັນທີ 28/10/2019, ເວລາ: 08:30 - 16:30 ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ທຄຕລ ສຳນັກງານໃຫຍ່ ແລະ ຕ້ອງຈ່າຍຄ່າທຳນຽມເອກະ ສານ ຈຳນວນເງິນ 250.000 ກີບ, ລາຍລະອຽດເອກກະສານປະກອບມີດັ່ງນີ້:
   ກ. ແບບຟອມການຍື່ນຊອງປະມູນ.
   ຂ. ໃບປະເມີນລາຄາ 1 ຊຸດ.
   ຄ. ແບບຕົບແຕ່ງ 1 ຊຸດ.

2. ລາຄາທີ່ບໍລິສັດສະເໜີຕ້ອງເປັນລາຄາທີ່ບໍລິສັດຂອງທ່ານສາມາດທຳການຕົບແຕ່ງເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ກັບບໍລິສັດອື່ນ. ຖ້າຫາກວ່າ ບໍລິສັດມີຄວາມຈຳເປັນໃນການເຮັດສັນຍາຮັບເໝົາຊ່ວງຕໍ່ນັ້ນ ຈະຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ແລະ ໄດ້ຮັບຄວາມເຫັນດີຈາກເຈົ້າຂອງໂຄງການເສຍກ່ອນ

3. ສາມາດສອບຖາມລາຍລະອຽດເພີ່ມເຕີມກ່ຽວກັບເຕັກນິກການຕົບແຕ່ງກ່ອນການຍື່ນຊອງໄດ້ຈາກວັນທີ **28**/10 - 19/11/2019, ໃນເວລາ 8:30 - 11:30 ໂມງ ແລະ 13:30 - 16:00 ໂມງ ທີ່ໝາຍເລກໂທລະສັບ 020 55522448, 020 77467722. ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

4. ການຍື່ນຊອງປະມູນຕ້ອງຍື່ນເປັນ 2 ຊອງ: 1.ຊອງປະມູນທາງດ້ານເຕັກນິກປະສົບການຜົນງານ, ຖານະການເງິນ ແລະ ບຸກຄະລາກອນ; 2. ຊອງປະມູນທາງດ້ານລາຄາ.

5. ຍື່ນເອກະສານສະເໜີລາຄາ ພ້ອມເອກະສານທາງດ້ານເຕັກນິກຂອງບໍລິສັດ ແລະ ຫຼັກຖານ ອື່ນໆ (ຕົ້ນສະບັບ) ມາຍັງ ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ກ່ອນວັນທີ 19/11/ 2019 ເວລາ 09:00 ໂມງ.

6. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈະທຳການປະເມີນຄັດເລືອກບໍລິສັດຮັບເໝົາຕົບແຕ່ງດ້ວຍວິທີຮູບແບບການປະມູນເປີດກ້ວາງ ພາຍຫຼັງສຳເລັດການຄັດເລືອກ ທຄຕລ ຈະແຈ້ງ ບໍລິສັດ ທີ່ສົ່ງຊອງເມີນຮັບຊາບ.

**<u>ເງື່ອນໄຂການປະກອບເອກກະສານການປະມູນ ຕ້ອງປະກອບມີດັ່ງນີ້:</u>**

**<u>ຊອງທີ 1:</u>**

ກ. ໃບທະບຽນວິສາຫະກິດ ປະຈໍາປີ 2018

ຂ. ໃບອະນຸຍາດດໍາເນີນທຸລະກິດປີປະຈຸບັນ ( ປີ 2018 ໃບຢັ້ງຢືນສືບຕໍ່ເຄື່ອນໄຫວດໍາເນີນທຸລະກິດ)

ຄ. ໃບທະບຽນອາກອນ 3 ປີຍ້ອນຫຼັງ (2016, 2017,2018)

ງ. ໃບຢັ້ງຢືນຖານະການເງິນປະຈຸບັນປີ 2019 (ອອກໃຫ້ໂດຍທະນາຄານ)

ຈ. ບັນຊີພາຫະນະຮັບໃຊ້ວຽກ ແລະ ອຸປະກອນຂອງບໍລິສັດ

ສ. ບັນຊີພະນັກງານຄຸ້ມຄອງ ແລະ ວິຊາການຂອງບໍລິສັດ

ຊ. ໃບຢັ້ງຢືນຜົນງານ ແລະ ປະສົບການ ການຕົບແຕ່ງສະເພາະທະນາຄານຢ່າງໜ້ອຍ 3 ໂຄງການ ລາຍລະອຽດຕາມແບບຟອມທີ່ຕິດຄັດດ້ານຫຼັງ.

**<u>ຊອງທີ 2:</u>**

ກ. ໃບປະເມີນລາຄາທີ່ປະກອບສໍາເລັດແລ້ວ 1 ຊຸດ.

ດັ່ງນັ້ນ ຈຶ່ງແຈ້ງມາຍັງບັນດາ ບໍລິສັດ ເພື່ອຍື່ນຊອງສະເໜີລາຄາຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

ຮ.ຜູ້ອໍານວຍການໃຫຍ່

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ລາໃຈ ຄັນພຣະວົງສ໌